ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ສຳເລັດການເຂົ້າຮ່ວມກອງປະຊຸມລະດັບໜ່ວຍງານອາຊຽນ+3 (ASEAN+3 Task Force) ແລະ ກອງປະຊຸມຂະບວນການວຽກງານເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ (AFCDM-WG)




ໃນລະຫວ່າງວັນທີ 2-10 ເດືອນ ກຸມພາ 2023, ທຫລ ໄດ້ເຂົ້າຮ່ວມກອງປະຊຸມລະດັບໜ່ວຍງານອາຊຽນ+3 (ASEAN+3 Task Force) ແລະ ກອງປະຊຸມຂະບວນການວຽກງານເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ (AFCDM-WG) ຊຶ່ງຈັດຂຶ້ນທີ່ ບາຫຼີ, ປະເທດ ອິນໂດເນເຊຍ ໂດຍຜູ້ແທນເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ປະກອບມີຕາງໜ້າຈາກກະຊວງການເງິນ ແລະ ທະນາຄານກາງຈາກ 10 ປະເທດອາຊຽນ ແລະ ປະເທດ +3 (ສປ. ຈີນ, ຍີ່ປຸ່ນ ແລະ ສ. ເກົາຫຼີ), ກອງເລຂາອາຊຽນ ແລະ ອົງການຈັດຕັ້ງສາກົນ.

ກອງປະຊຸມດັ່ງກ່າວເປັນກອງປະຊຸມຊ່ອງໜ້າທີ່ຈັດຂຶ້ນເປັນຄັ້ງທຳອິດພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດ 19, ເພື່ອທົບທວນການຈັດຕັ້ງປະຕິບັດວຽກງານໃນກອບຮ່ວມມືອາຊຽນ ແລະ ອາຊຽນ+3 ໃນໄລຍະ 01 ປີ ຜ່ານມາ ແລະ ກຳນົດທິດທາງແຜນການໃນຕໍ່ໜ້າເພື່ອກະກຽມລາຍງານໃຫ້ແກ່ກອງປະຊຸມລະດັບສູງອາຊຽນ ແລະ ອາຊຽນ+3 ພິຈາລະນາຮັບຮອງໃນເດືອນ ມີນາ 2023.

ກອງປະຊຸມລະດັບໜ່ວຍງານ TF+3 ຄັ້ງນີ້ ໄດ້ປຶກສາຫາລືວຽກງານການຮ່ວມມືຫຼາຍຝ່າຍພາຍໃຕ້ຂໍ້ລິເລີ່ມຊຽງໃໝ່ (CMIM) ໂດຍສະເພາະຮັບຊາບແຜນການປັບປຸງໂຄງສ້າງຂອງ CMIM ເພື່ອສ້າງປະສິດທິພາບ ແລະ ໃຫ້ສາມາດເຂົ້າເຖິງກອງທຶນດັ່ງກ່າວໄດ້; ແລະ ແຜນການກະກຽມເຮັດການທົດລອງກອງທຶນ CMIM (Test Run) ຄັ້ງທີ 14 ເພື່ອກະກຽມຄວາມພ້ອມໃຫ້ແກ່ກອງທຶນດັ່ງກ່າວໃນເວລາເກີດມີການກູ້ຢືມຕົວຈິງ. ນອກນີ້, ຍັງໄດ້ປຶກສາ

ຫາລືກ່ຽວກັບວຽກງານການເງິນດີຈິຕອລ (FinDig) ເພື່ອສ້າງບົດຄົ້ນຄວ້າ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ໄດ້ປຶກສາຫາລືວຽກງານອົງການຕິດຕາມສະພາບເສດຖະກິດມະຫາພາກອາຊຽນ+3 (AMRO) ໂດຍຊຸກຍູ້ວຽກງານການບໍລິຫານອົງກອນ, ວຽກງານຕິດຕາມສະພາບເສດຖະກິດ, ວຽກງານການຊຸກຍູ້ກອງທຶນ CMIM ແລະ ການຊ່ວຍເຫຼືອທາງດ້ານວິຊາການ (TA) ເພື່ອຍົກສູງພາລະບົດບາດໃຫ້ແກ່ອົງການ AMRO ແລະ ສ້າງຄວາມເຂັ້ມແຂງໃນການເປັນກອງເລຂາໃຫ້ແກ່ປະເທດສະມາຊິກອາຊຽນ+3.




ກອງປະຊຸມ (AFCDM-WG), ທີ່ປະຊຸມໄດ້ຮັບຮອງເອົາບົດບັນທຶກກອງປະຊຸມຄັ້ງຜ່ານມາຂອງແຕ່ລະຄະນະກໍາມະການ (WCs) ພາຍໃຕ້ວຽກງານການເຊື່ອມໂຍງການເງິນ-ເງິນຕາອາຊຽນ. ສະມາຊິກໄດ້ປຶກສາຫາລືຮ່ວມກັນເພື່ອໃຫ້ສາມາດເປັນເອກະພາບຕໍ່ກັບແຜນບູລິມະສິດທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດໃນປີ 2023 ແລະ ຂໍ້ລິເລີ່ມຕ່າງໆ, ຂໍ້ສະເໜີການປັບປຸງບັນດາໜ້າວຽກ (TOR) ຂອງແຕ່ລະຄະນະກໍາມະການ. ນອກຈາກນີ້, ທຫລ ຍັງໄດ້ເຂົ້າຮ່ວມປຶກສາຫາລືກ່ຽວກັບຂໍ້ລິເລີ່ມໃນການສ້າງລະບົບການຊໍາລະຂ້າມແດນກັບປະເທດລຸ່ມແມ່ນໍ້າຂອງລວມມີ ກໍາປູເຈຍ, ໄທ, ມຽນມາ ແລະ ຫວຽດນາມ ເພື່ອສຶກສາຄວາມເປັນໄປໄດ້ໃນການພັດທະນາການຊໍາລະຂ້າມແດນໃນອະນາຄົດ.

ຜ່ານການປຶກສາຫາລືໃນກອງປະຊຸມໜ່ວຍງານອາຊຽນ+3 ແລະ ວຽກງານອາຊຽນ ເຫັນວ່າຍັງມີຫຼາຍບັນຫາທີ່ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດໃນປີ 2023. ໃນນີ້, ຍັງມີຫຼາຍບັນຫາທີ່ກອງປະຊຸມບໍ່ສາມາດເປັນເອກະພາບໄດ້ເນື່ອງຈາກອີງໃສ່ເງື່ອນໄຂ ແລະ ລະບຽບພາຍໃນຂອງບັນດາປະເທດສະມາຊິກທີ່ແຕກຕ່າງກັນຈະຕ້ອງໄດ້ສືບຕໍ່ຄົ້ນຄວ້າເພື່ອກະກຽມໄປລາຍງານໃນກອງປະຊຸມລະດັບສູງຊຶ່ງຈະໄດ້ຈັດຂຶ້ນໃນຊ່ວງທ້າຍເດືອນມີນາ 2023.

**# ຂ່າວ ແລະ ພາບ: ພະແນກຮ່ວມມືຫຼາຍຝ່າຍ, ກົມຮ່ວມມືສາກົນ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນໍາໃຊ້ເງິນກີບ**